# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ.. ໜ້າ 01-06**

**II. ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ.................................................... ໜ້າ 07-09**

**III. ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຄຕພ............................................ ໜ້າ 10**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ກັນຍາ 2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

**1) ພັກກອມມູນິດຫວຽດນາມ**

ວັນທີ 5/9/2023, ສະຫາຍ ຫງວຽນຝູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ຕ້ອນຮັບ ສະຫາຍ ຫຼີວຈ້ຽນຊາວ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສສ ຫວຽດນາມ, ຊຶ່ງ ສະຫາຍ ຫງວຽນຝູຈ້ອງ ໄດ້ສະແດງຄວາມຍິນດີຕໍ່ການມາຢ້ຽມຢາມໃນຄັ້ງນີ້ ທີ່ຢູ່ໃນບັນຍາກາດທີ່ສອງປະເທດ ພວມສະເຫຼີມສະຫຼອງ ວັນສ້າງຕັ້ງການພົວພັນຄູ່ຮ່ວມຍຸດທະສາດຮອບດ້ານ ຄົບຮອບ 15 ປີ; ທັງໄດ້ຝາກຄວາມຢື້ຢາມຖາມຂ່າວເຖິງ ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ. ສອງຝ່າຍ ຢືນຢັນສືບຕໍ່ການຮ່ວມມືທີ່ສະໜິດແໜ້ນ, ຍົກລະດັບຄວາມໄວ້ເນື້ອເຊື່ອໃຈ ເຊິ່ງກັນ ແລະ ກັນ ເພື່ອໃຫ້ການຮ່ວມມືສອງຝ່າຍ ກໍຄືຜົນປະໂຫຍດຂອງສອງຊາດຫວຽດນາມ-ຈີນກ້າວເຂົ້າສູ່ລະດັບໃໝ່.

ວັນທີ 17/09/2023, ສະຫາຍ ຟາມ ມິງຈິ້ງ, ນາຍົກລັດຖະມົນຕີຫວຽດນາມ ໄດ້ພົບປະກັບ ສະຫາຍ ຫລີ ສຽງ ນາຍົກລັດຖະມົນຕີຈີນ ໃນໂອກາດເຂົ້າຮ່ວມງານວາງສະແດງສິນຄ້າອາຊຽນ-ຈີນ (China-ASEAN Expo) ຄັ້ງທີ 20 ແລະ ກອງປະຊຸມສຸດຍອດທຸລະກິດ ແລະ ການລົງທຶນອາຊຽນ-ຈີນ ຢູ່ ນະຄອນໜານໜິງ ຂອງ ສປ ຈີນ. ສະຫາຍ ຟາມ ມິງຈິ້ງ ໄດ້ກ່າວວ່າ ຈີນ ເປັນປະເທດທຳອິດທີ່ຫວຽດນາມ ໄດ້ສ້າງຕັ້ງການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ. ຫວຽດນາມ ສະໜັບສະໜູນການພັດທະນາຂອງຈີນ ແລະ ຍິນດີຍົກລະດັບການພົວພັນຮ່ວມມືໄປສູ່ລະດັບໃໝ່. ສະຫາຍ ຫຼີ ສຽງ ກ່າວວ່າ ຈີນ ແລະ ຫວຽດນາມ ເປັນເພື່ອນບ້ານສັງຄົມນິຍົມທີ່ມີມູນເຊື້ອ, ມີຊະຕາກຳຮ່ວມກັນ, ເປີດກວ້າງການຄ້າ ແລະ ການແລກປ່ຽນລະຫວ່າງປະຊາຊົນສອງຊາດ. ສອງຝ່າຍເຫັນດີແກ້ໄຂບັນຫາຄວາມແຕກຕ່າງຜ່ານການເຈລະຈາ ແລະ ປຶກສາຫາລື. ການຮ່ວມມືດ້ານການຄ້າລະຫວ່າງສອງປະເທດຫວຽດນາມ ແລະ ຈີນ ໃນປີ 2003 ບັນລຸພຽງ 78,2 ຕື້ໂດລາ ແລະ ໄດ້ທະວີຂຶ້ນເປັນ 975,6 ຕື້ໂດລາ ໃນປີ 2022.

**2). ພັກກອມມູນິດຈີນ**

ວັນທີ 11/09/2023, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ, ປະທານຄະນະກຳມະການທະຫານສູນກາງ ໄດ້ລົງກວດກາກຸ່ມທະຫານທີ 78 (ທາງພາກຕາເວັນອອກສຽງເໜືອ) ແລະ ໄດ້ເນັ້ນໜັກໃຫ້ລົງເລິກດ້ານແນວຄິດສ້າງກອງທັບໃຫ້ເຂັ້ມແຂງ, ປະຕິບັດຍຸດທະສາດທາງການທະຫານໃນຍຸກໃໝ່, ຍົກສູງຄວາມສາມາດດ້ານການສູ້ຮົບຂອງກອງທັບຢ່າງຮອບດ້ານ ແລະ ປະຕິບັດໜ້າທີ່ຕາມການມອບໝາຍຂອງພັກ ກໍຄື ປະຊາຊົນ. ພ້ອມດຽວກັນ, ຕ້ອງເພີ່ມທະວີກຳລັງປະດິດສ້າງ, ເຕົ້າໂຮມຄວາມສາມັກຄີຄຸ້ມຄອງການສຶກສາອົບຮົມກອງທັບຢ່າງເຂັ້ມງວດ, ຮັກສາການລວມສູນເປັນເອກະພາບ ແລະ ຄວາມໝັ້ນຄົງຂອງກອງທັບ.

ວັນທີ 16-17/09/2023, ທ່ານ ຫວາງອີ້, ກຳມະການກົມການເມືອງ, ຫົວໜ້າຫ້ອງການວຽກງານການຕ່າງປະເທດຂອງສູນກາງພັກກອມມູນິດຈີນ ໄດ້ພົບປະກັບ ທ່ານ ແຈກ ຊຸນລີວານ, ທີ່ປຶກສາດ້ານວຽກງານຄວາມໝັ້ນຄົງແຫ່ງຊາດຂອງອາເມລິກາ ຢູ່ທີ່ປະເທດມານຕາ. ສອງຝ່າຍໄດ້ແລກປ່ຽນກ່ຽວກັບການຮັກສາຄວາມໝັ້ງຄົງ, ປັບປຸງການພົວພັນຈີນ-ອາເມລິກາ ແລະ ວຽກງານອື່ນໆ. ໃນນັ້ນ, ໄດ້ເນັ້ນໜັກບັນຫາໄຕຫວັນ ທີ່ເປັນອະທິປະໄຕຂອງຈີນ, ບໍ່ອະນຸຍາດໃຫ້ພາຍນອກເຂົ້າມາແຊກແຊງ. ຂະນະດຽວກັນ, ວັນທີ 15/09/2023, ກະຊວງການຕ່າງປະເທດຈີນ ໄດ້ປະກາດຂວ້ຳບາດບໍລິສັດດ້ານຄວາມໝັ້ນຄົງຂອງ ອາເມລິກາ 02 ບໍລິສັດ ຄື: Lockheed Martin ແລະ Northrop Grumman ເນື່ອງຈາກໄດ້ຂາຍອາວຸດໃຫ້ກັບໄຕຫວັນ.

**3). ພັກແຮງງານເກົາຫຼີ**

ວັນທີ 08/09/2023, ສະຫາຍ ກິມ ເຈິງອຸນ, ຜູ້ນຳຂອງ ສປປ ເກົາຫຼີ ໄດ້ເຂົ້າຮ່ວມຂະບວນສວນສະໜາມ ຢູ່ ສະໜາມຫຼວງກິມອິນຊຸງ ທີ່ ນະຄອນຫຼວງພຽງຢາງ ເນື່ອງໃນໂອກາດສະເຫຼີມສະຫຼອງວັນຊາດຂອງ ສປປ ເກົາຫຼີ ຄົບຮອບ 75 ປີ. ຄະນະຜູ້ແທນຈີນ ນຳໂດຍ ສະຫາຍ ຫຼີວ ກົວຈົ່ງ, ກຳມະການກົມການເມືອງສູນກາງພັກກອມມູນິດຈີນ, ຮອງ

ນາຍົກລັດຖະມົນຕີ ສປ ຈີນ ໄດ້ເຂົ້າຮ່ວມພິທີດັ່ງກ່າວຕາມການເຊື້ອເຊີນຂອງ ສປປ ເກົາຫຼີ. ພ້ອມນີ້, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ພັກກອມມູນິດຈີນ, ປະທານປະເທດແຫ່ງ ສປ ຈີນ ໄດ້ສົ່ງໂທລະເລກອວຍພອນ ເຖິງ ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ຊຶ່ງມີເນື້ອໃນບາງຕອນວ່າ ສປ ຈີນ ຍິນດີເສີມຂະຫຍາຍຍຸດທະສາດດ້ານການສື່ສານ ແລະ ຮ່ວມມືດ້ານວິຊາການໃນຂົງເຂດຕ່າງໆກັບ ສປປ ເກົາຫຼີ. ສ່ວນ ລັດເຊຍ ໄດ້ສົ່ງວົງດົນຕີຂອງສະຖາບັນວັດທະນາທຳສູນກາງ ຂອງກະຊວງປ້ອງກັນປະເທດລັດເຊຍ (ວົງດົນຕີທີ່ໃຫຍ່ທີ່ສຸດຂອງລັດເຊຍ) ປະກອບສ່ວນສະແດງໃນງານດັ່ງກ່າວ. ທ່ານ ວາລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ ຍັງໄດ້ສົ່ງໂທລະເລກອວຍພອນ ເຖິງ ສະຫາຍ ກິມເຈິງອຸນ ໂດຍໄດ້ລະບຸວ່າ ຍິນດີເສີມຂະຫຍາຍສາຍພົວພັນ ລະຫວ່າງ ລັດເຊຍ-ສປປ ເກົາຫຼີ ຢ່າງຮອບດ້ານເພື່ອຮັບປະກັນຄວາມໝັ້ນຄົງ ແລະ ສະຖຽນລະພາບ ໃນພາກພື້ນ.

ລະຫວ່າງວັນທີ 10-17/09/2023, ສະຫາຍ ກິມ ເຈິງອຸນ, ຜູ້ນຳສູງສຸດຂອງ ສປປ ເກົາຫຼີ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ສປປ ເກົາຫຼີ ໄດ້ເດີນທາງຢ້ຽມຢາມລັດເຊຍ ດ້ວຍລົດໄຟຫຸ້ມເກາະ, ພົບປະກັບ ທ່ານ ວາລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ, ສອງຝ່າຍ ໄດ້ແລກປ່ຽນຄຳຄິດເຫັນ, ປຶກສາຫາລືໃນຂົງເຂດຕ່າງໆເປັນຕົ້ນ ເສດຖະກິດ, ເຕັກໂນໂລຊີທາງການທະຫານ, ວຽກງານປ້ອງກັນຊາດ, ວັດທະນະທຳ ແລະ ອື່ນໆ. ສອງຝ່າຍ ເຫັນດີຍົກລະດັບການພົວພັນເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ. ນອກນີ້, ສະຫາຍ ກິມ ເຈິງອຸນ ຍັງໄດ້ ຢ້ຽມຢາມຫຼາຍສະຖານທີ່ ເຊັ່ນ: ໂຮງງານຜະລິດອາວຸດ, ສູນອາວະກາດວໍທໍນີ, ກອງທັບອາກາດລັດເຊຍ, ຫໍພິພິທະພັນສັດນ້ຳ ແລະ ມະຫາວິທະຍາໄລວິທະຍາສາດ Federal ທີ່ ເມືອງວາລາດີໂວສຕົກ ແລະ ເມືອງກອມໂຊໂມສ.

**4). ພັກກອມມູນິດກູບາ**

ວັນທີ 06 ສິງຫາ 2023, ສະຫາຍ Miguel Diaz-Canel, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ໄດ້ສະແດງຄວາມຊົມເຊີຍຕໍ່ລັດຖະບານ ແລະ ປະຊາຊົນ Bolivia ເນື່ອງໃນໂອກາດສະເຫຼີມສະຫຼອງ 198 ປີ ແຫ່ງວັນໄດ້ຮັບເອກະລາດຂອງໂບລີ ຊຶ່ງມີບາງຕອນລະບຸວ່າ: ໂບລີວີ ເປັນແບບຢ່າງຂອງການຕໍ່ສູ້ຂອງປະຊາຊົນໃນປະຫວັດສາດ ເພື່ອກອບກູ້ເອກະລາດ ແລະ ອະທິປະໄຕແຫ່ງຊາດ; ຕີລາຄາສູງຕໍ່ສາຍພົວພັນຮ່ວມມືລະຫວ່າງ ກູບາ-ໂບລີວີ; ກູບາ ສະໜັບສະໜູນການປະຕິວັດໂບລີວີ, ຮ່ວມມືກັນຕ້ານການແຊກແຊງຂອງຈັກກະພັດນິຍົມ.

ໃນວັນທີ 19-22 ສິງຫາ 2023, ທ່ານ Miguel Diaz-Canel ເລຂາທິການທີ່ໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ກູບາ ໄດ້ເຢັຽມຢາມ Angola ຢ່າງເປັນທາງການ; ໄດ້ພົບປະກັບ ທ່ານ João Lourenço, ປະທານາທິບໍດີແອງໂກລາ, ສອງຝ່າຍໄດ້ຢືນຢັນຈະສືບຕໍ່ເປີດກວ້າງ ແລະ ຮັດແໜ້ນການຮ່ວມມືໃນຂົງເຂດທີ່ຕ່າງຝ່າຍຕ່າງມີຄວາມສົນໃຈ. ສອງຝ່າຍ ໄດ້ລົງນາມ 3 ເອກະສານຄື: ວຽກງານການທ່ອງທ່ຽວ, ການລົງທຶນ ແລະ ການຢາ. ທ່ານ Miguel Diaz-Canel ຍັງໄດ້ເຂົ້າຮ່ວມກອງປະຊຸມສຸດຍອດຂອງກຸ່ມ BRICS ໃນຖານະປະທານກຸ່ມ 77, ທີ່ຂຶ້ນຢູ່ນະຄອນໂຈຮັນເນສເບີກ, ອາຟຣິກາໃຕ້ ລະຫວ່າງວັນທີ 22-24 ສິງຫາ 2023 ຜ່ານມາ.

ວັນທີ 08 ສິງຫາ 2023, ທ່ານ Esteban Lazo Hernández, ປະທານສະພາແຫ່ງຊາດອຳນາດປະຊາຊົນກູບາ ໄດ້ຕ້ອນການຢ້ຽມຢາມ ສ. ກູບາ ຂອງ ທ່ານ Diosdado Cabello Rondón ຮອງປະທານທີໜຶ່ງ ພັກສັງຄົມນິຍົມເອກະພາບເວເນຊູເອລາ, ໃນການພົບປະ ທ່ານ Esteban Lazo Hernández ກ່າວວ່າ ຕໍ່ໜ້າສະພາບຄວາມຫຍຸ້ງຍາກ ຈາກການປິດລ້ອມຂອງລັດຖະບານອາເມຣິກາ ທີ່ນັບມື້ເພີ່ມຄວາມຮຸນແຮງຂຶ້ນ ມີຄວາມຈຳເປັນທີ່ສອງປະເທດພວກເຮົາ ຕ້ອງໄດ້ຮັດແໜ້ນຄວາມສາມັກຄີ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ໃນເວທີສາກົນ ເພື່ອປົກປ້ອງອຳນາດອະທິປະໄຕຂອງຕົນ ແລະ ສະແດງຄວາມຂອບໃຈ ລັດຖະບານເວເນຊູເອລາ ທີ່ໃຫ້ການຊ່ວຍເຫຼືອກູບາ ຕະຫຼອດໄລຍະຜ່ານມາ. ສ່ວນທ່ານ Diosdado Cabello Rondón ໄດ້ຢັ້ງຢືນ ຈະສືບຕໍ່ໃຫ້ການຊ່ວຍເຫຼືອກູບາ ແລະ ຮ່ວມມືກັນໃນການຕໍ່ສູ້ຕ້ານລັດທິຈັກກະພັດນິຍົມ.

**5). ຜົນການເລືອກຕັ້ງທົ່ວໄປສິງກະໂປ**

ວັນທີ 01/09/2023, ໄດ້ມີການເລືອກຕັ້ງປະທານາທິບໍດີສິງກະໂປ, ມີຜູ້ອອກມາໃຊ້ສິດລົງຄະແນນສຽງປະມານ 2,7 ລ້ານຄົນ. ຜົນການເລືອກຕັ້ງ ທ່ານ Tharman Shanmugaratnam ອາຍຸ 66 ປີ, ອະດີດສະມາຊິກພັກ PAP, ອະດີດລັດຖະມົນຕີອາວຸໂສ ໄດ້ຮັບຄະແນນສຽງສະໜັບສະໜູນ 70,40%; ທ່ານ Ng Kok Song ໄດ້ 15,72% ແລະ ທ່ານ Tan Kin Lian ໄດ້ 13,88%, ຊຶ່ງທັງສາມທ່ານ ແມ່ນບໍ່ໄດ້ສັງກັດຢູ່ພັກການເມືອງໃດ. ຕໍ່ໄຊຊະນະດັ່ງກ່າວ ທ່ານ Tharman ໄດ້ເປັນປະທານາທິບໍດີສິງກະໂປຄົນທີ 9 ໃນວາລະດຳລົງຕຳແໜ່ງ 06 ປີ. ຕາມລັດຖະທຳມະນູນຂອງສິງກະໂປ ປະທານາທິບໍດີ ສາມາດດຳລົງຕຳແໜ່ງໄດ້ບໍ່ເກີນສອງສະໄໝ ແລະ ບໍ່ສັງກັດພັກການເມືອງໃດໜຶ່ງໄດ້. ຂະນະທີ່, ທ່ານ ຫຼີ ຊຽນຫຼົງ, ນາຍົກລັດຖະມົນຕີສິງກະໂປ ໄດ້ສະແດງຄວາມຍິນດີຕໍ່ໄຊຊະນະຂອງ ທ່ານ Tharman ແລະ ເຊື່ອໝັ້ນວ່າ ທ່ານຈະສາມາດປະຕິບັດໜ້າທີ່ໄດ້ເປັນຢ່າງດີ. ນອກນີ້, ບັນດາຜູ້ນຳຫຼາຍປະເທດ ໄດ້ສະແດງຄວາມຊົມເຊີຍຕໍ່ໄຊຊະນະດັ່ງກ່າວຂອງ ທ່ານ Tharman ເປັນຕົ້ນ ມາເລເຊຍ, ອາເມລິກາ, ອິນເດຍ, ອູແກຣນ.

**2. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

ໃນເດືອນກັນຍາ 2023, ມີຫຼາຍເຫດການພົ້ນເດັ່ນ ທີ່ເກີດຂຶ້ນໃນຂົງເຂດອາຊີ-ປາຊີຟິກ ເຊັ່ນ:

- ວັນທີ 10/09/2023, ພາຍຫຼັງສຳເລັດການເຂົ້າຮ່ວມກອງປະຊຸມສຸດຍອດຜູ້ນຳກຸ່ມປະເທດ G20, ທ່ານ Joe Biden, ປະທານາທິບໍດີອາເມລິກາ ໄດ້ຢ້ຽມຢາມ ຫວຽດນາມ ຢ່າງເປັນທາງການ, ໄດ້ພົບປະກັບ ທ່ານ ຫງວຽນ ຟູຈອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ທ່ານ ຫວໍ ວັນເຖືອງ, ປະທານປະເທດຫວຽດນາມ ແລະ ທ່ານ ຟາມ ມິງຈິ໋ງ, ນາຍົກລັດຖະມົນຕີຫວຽດນາມ, ສອງຝ່າຍເຫັນດີຍົກລະດັບການພົວພັນສອງຝ່າຍຂຶ້ນເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ, ເພີ່ມທະວີການຮ່ວມມືດ້ານການລົງທຶນ ແລະ ການພັດທະນາແບບຍືນຍົງ. ທ່ານ ຫງຽວນ ຟູຈອງ ເນັ້ນໜັກວ່າການພົວພັນຮ່ວມມືຂອງສອງຝ່າຍຄວນສືບຕໍ່ເຄົາລົບບັນດາຫຼັກການພື້ນຖານຕ່າງໆ ເປັນຕົ້ນ ກົດບັດ ສປຊ, ກົດໝາຍສາກົນ, ເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ; ສືບຕໍ່ຮ່ວມມືທາງດ້ານເສດຖະກິດ-ການຄ້າ, ວິທະຍາສາດ ແລະ ເຕັກໂນໂລຊີ. ທ່ານ Biden ໄດ້ສະແດງຄວາມຊົມເຊີຍຕໍ່ການຍົກລະດັບການຮ່ວມມືຂອງສອງຝ່າຍໃນຄັ້ງນີ້ ແລະ ເປັນບາດກ້າວໃໝ່ໃນການລົງເລິກການຮ່ວມມືທາງດ້ານເຕັກໂນໂລຊີ (Semiconductor), AI, ເສດຖະກິດ-ການຄ້າ, ການລົງທຶນ ແລະ ການສຶກສາ.

- ການເມືອງໄທ: ວັນທີ 02/09/2023, ເຈົ້າຊີວິດໄທ ໄດ້ປະກາດຮັບຮອງບັນດາລາຍຊື່ຄະນະລັດຖະບານຊຸດໃໝ່ຂອງໄທ ໂດຍປະກອບດ້ວຍ 34 ທ່ານ, ຊຶ່ງມີບັນດາຕຳແໜ່ງສຳຄັນດັ່ງນີ້: ທ່ານ ເສດຖາ ທະວີສິນ ເປັນນາຍົກລັດຖະມົນຕີຄົນທີ 30 ແລະ ລັດຖະມົນຕີກະຊວງການເງິນ; ທ່ານ ພູມທຳ ເວດຊະຍະໄຊ ເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຄ້າ; ທ່ານ ສົມສັກ ເທບສຸທິນ ເປັນຮອງນາຍົກນາຍົກລັດຖະມົນ; ທ່ານ ປານປີ ພະຫິດທະນາກອນ, ເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ; ທ່ານ ອານຸທິນ ຊານວິລະກຸນ ເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ; ທ່ານ ພົນເອກ ພັດຊະລາວັດ ວົງສຸວັນ ເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ທ່ານ ພິລະພັນ ສາລີລັດທະວິພາກ ເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງພະລັງງານ; ທ່ານ ພວງເພັດ ຊຸນລະອຽດ ເປັນລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ແລະ ທ່ານ ສຸທິນ ຄັງແສງ ເປັນລັດຖະມົນຕີປ້ອງກັນປະເທດ. ພາຍຫຼັງພິທີສາບານຕົນ, ທ່ານ ເສດຖາ ທະວີສິນ ໄດ້ຖະແຫຼງຂ່າວວ່າ: ລັດຖະບານໄທຊຸດໃໝ່ ຈະອອກແຮງສຸດຂີດ ເພື່ອຊຸກຍູ້ຄວາມຍຸດຕິທຳ ແລະ ຄວາມສະເໝີພາບໃນສັງຄົມ, ພະຍາຍາມສ້າງໄທໃຫ້ເປັນປະເທດທີ່ໝັ້ນຄົງ, ຈະເລີນຮຸ່ງເຮືອງ ແລະ ພັດທະນາແບບຍືນຍົງ. ສ່ວນບັນຫາເລັ່ງດ່ວນຈຳນວນໜຶ່ງ ທີ່ຕ້ອງແກ້ໄຂແມ່ນການຊ່ວຍຊາວກະສິກອນ, ບັນຫາພະລັງງານ, ການອຳນວຍຄວາມສະດວກດ້ານການທ່ອງທ່ຽວ ເພື່ອດຶງດູດນັກທ່ອງທ່ຽວ ແລະ ການລົງທຶນ, ການແກ້ໄຂລັດຖະທຳມະນູນບາງມາດຕາທີ່ມີຄວາມຈຳເປັນ.

- ລະຫວ່າງວັນທີ 14-16/09/2023, ທ່ານ ຮຸນ ມາເນດ, ນາຍົກລັດຖະມົນຕີກຳປູເຈຍ ຢ້ຽມຢາມ ຈີນ ຢ່າງເປັນທາງການ ແລະ ໄດ້ເຂົ້າຢ້ຽມຂໍ່ານັບ ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ; ພົບປະກັບ ທ່ານ ຫຼີ ສຽງ ນາຍົກລັດຖະມົນຕີຈີນ. ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ ການຢ້ຽມຢາມຈີນ ເປັນປະເທດທຳອິດຂອງ ທ່ານ ຮຸນ ມາເນດ ໄດ້ສະແດງໃຫ້ເຫັນເຖິງຄວາມສຳຄັນໃນການສືບຕໍ່ເສີມຂະຫຍາຍສາຍພົວພັນຈີນ-ກຳປູເຈຍ. ຈີນ ຍິນດີຮ່ວມກັບກຳປູເຈຍ

ຊຸກຍູ້ການສ້າງຄູ່ຮ່ວມຊະຕາກຳຈີນ-ກຳປູເຈຍ ໃຫ້ກ້າວສູ່ລວງເລິກ ແລະ ແໜ້ນແຟ້ນກວ່າເກົ່າ. ທ່ານ ຮຸນ ມາເນດ ກ່າວວ່າ ການຢ້ຽມຢາມຈີນ ເປັນປະເທດທຳອິດ ເປັນການຢືນຢັນສືບຕໍ່ລົງເລິກການຮ່ວມມືກັບຈີນ ຕາມຫຼັກການຈີນດຽວ, ເດັດດ່ຽວສະໜັບສະໜູນການຮັກສາຜົນປະໂຫຍດຂອງຈີນ. ກຳປູເຈຍ ຍິນດີສົມທົບກັບຈີນຢ່າງໃກ້ຊິດໃນການຂະຫຍາຍສາຍພົວພັນສອງຊາດກ້າວຂຶ້ນສູ່ລະດັບໃໝ່.

- ລະຫວ່າງວັນທີ 04-07/09/2023, ອິນໂດເນເຊຍ ໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 43 ທີ່ ນະຄອນຫຼວງຈາກາຕາ ພາຍໃຕ້ຄຳຂວັນ: ອາຊຽນມີຄວາມສຳຄັນ ສູນກາງແຫ່ງການຈະເລີນເຕີບໂຕ. ກອງປະຊຸມໄດ້ທົບທວນຄືນການສ້າງປະຊາຄົມອາຊຽນໃຫ້ເຂັ້ມແຂງ ແລະ ການຮ່ວມມືຂອງອາຊຽນກັບພາຍນອກ; ຮັບຊາບຄວາມຄືບໜ້າຂອງການສ້າງວິໄສທັດປະຊາຄົມອາຊຽນ ພາຍຫຼັງປີ 2025 ແລະ ບັນຫາມຽນມາ. ໃນໂອກາດນີ້, ທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ ໄດ້ນຳພາຄະນະເຂົ້າຮ່ວມກອງປະຊຸມດັ່ງກ່າວ ແລະ ໄດ້ເຊື້ອເຊີນບັນດາຜູ້ນຳອາຊຽນ ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ທີ່ ສປປ ລາວ ເປັນເຈົ້າພາບໃນປີ 2024. ນອກຈາກນັ້ນ ຍັງມີກອງປະຊຸມອາຊຽນ+3 (ຈີນ, ຍີ່ປຸ່ນ ແລະ ສ.ເກົາຫຼີ), ຊຶ່ງ ທ່ານ ຫຼີສຽງ, ນາຍົກລັດຖະມົນຕີຈີນ ໄດ້ກ່າວວ່າ ສປ ຈີນ ສະໜັບສະໜູນຄວາມເປັນແກນກາງຂອງອາຊຽນ, ໃນໄລຍະຜ່ານມາ ຈີນ ແລະ ອາຊຽນ ມີຜົນສຳເລັດຮ່ວມກັນ, ພວກເຮົາມີຄວາມປະສົງສະແຫວງຫາສັນຕິພາບ ແລະ ການພັດທະນາຮ່ວມກັນ; ເມື່ອໃດ ທີ່ ຈີນ ແລະ ອາຊຽນຍັງຮັກສາຄວາມໝາຍໝັ້ນທີ່ຖືກຕ້ອງຮ່ວມກັນ ພວກເຮົາ ຈະສາມາດຜ່ານຜ່າທຸກຄວາມຫຍຸ້ງຍາກ, ພວກເຮົາຕ້ອງຮ່ວມກັນຫຼີກລ່ຽງການເກີດສົງຄາມເຢັນຄັ້ງໃໝ່ ໃນທ່າມກາງຄວາມຂັດແຍ່ງຫຼາຍປະເທດໃນໂລກ. ສ່ວນ ນາຍົກລັດຖະມົນຕີຍີ່ປຸ່ນ ກໍໄດ້ຢືນຢັນສະໜັບສະໜູນໂລກເສລີ ແລະ ເປີດກວ້າງ ບົນພື້ນຖານກົດໝາຍສາກົນ; ຈະຊ່ວຍອາຊຽນພັດທະນາບຸກຄະລາກອນ ປະມານ 5,000 ຄົນ ແລະ ຈະພັດທະນາໂຄ່ງລ່າງພື້ນຖານແກ່ອາຊຽນ.

**2). ສະພາບການ ໃນຂົງເຂດເອີຣົບ ແລະ ອາເມລິກາ**

ການໂຈມຕີກັນລະຫວ່າງອູແກຣນ ແລະ ລັດເຊຍ ຍັງສືບຕໍ່ທະວີຄວາມຮຸນແຮງ, ໂດຍສະເພາະໃນເມືອງ Zaporizhia, Bakhmut, Odesa ແລະ Kherson. ລັດເຊຍ ສາມາດທຳລາຍໂຮງງານຜະລິດອາວຸດ, ສູນສືບຂ່າວລັບ, ສາງອາວຸດຂອງອູແກຣນ ແລະ ລົດຖັງ ຫຼາຍຄັນ. ຂະນະທີ່ບັນດາປະເທດຕາເວັນຕົກ ໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອອູແກຣນຢ່າງຕໍ່ເນື່ອງ, ຊຶ່ງໃນວັນທີ 6/9/2023, ລັດຖະມົນຕີຕ່າງປະເທດອາເມລິກາ ໄດ້ຢ້ຽມຢາມອູແກຣນ ແລະ ພົບກັບປະທານາທິບໍດີອູແກຣນ ເພື່ອຢືນຢັນການສະໜັບສະໜູນ ແລະ ໄດ້ສົ່ງລູກປືນຢູເຣນຽມ (ຊຶ່ງເປັນລູກປືນທີ່ອັນຕະລາຍທຳລາຍມະຫາສານ) ໄປໃຫ້ອູແກຣນ. ອາເມລິກາ ເປັນປະເທດທີສອງ ທີ່ສົ່ງລູກປືນຊະນິດດັ່ງກ່າວໃຫ້ອູແກຣນ (ອັງກິດສົ່ງໄປກ່ອນໝູ່ ໃນເດືອນ 3/2023 ຜ່ານມາ); ໂປໂລຍ ຈະສົ່ງລະບົບລູກສອນໄຟ HIMARS 486 ເຄື່ອງ ໃຫ້ ອູແກຣນ. ວັນທີ 11/09/2023, ທ່ານ ນາງ Annalena Baerbock, ລັດຖະມົນຕີກະຊວງການຕ່າງປະເທດເຢຍລະມັນ ໄດ້ຢ້ຽມຢາມອູແກຣນ, ພົບປະກັບ ທ່ານ Volodymyr Zelensky, ປະທານາທິບໍດີອູແກຣນ ແລະ ໄດ້ປະກາດຊ່ວຍເຫຼືອອູແກຣນ ຕື່ມອີກ 20 ລ້ານ ເອີໂຣ.

ວັນທີ 01-06/09/2023, ອົງການສົນທິສັນຍາຄວາມໝັ້ນຄົງ ຫຼື CSTO ທີ່ມີ 6 ປະເທດສະມາຊິກ ຄື ລັດເຊຍ, ເບລາຣຸດຊີ, ຕາຈິກິດສະຖານ, ກຣກກິດສະຖານ, ກາຊັກສະຖານ ແລະ ອາກເມນີ ໄດ້ຊ້ອມຮົບຮ່ວມກັນ, ໂດຍມີທະຫານ 2000 ກວ່າຄົນເຂົ້າຮ່ວມ (ແຕ່ທະຫານອາກເມນີ ບໍ່ເຂົ້າຮ່ວມ). ສ່ວນກອງທັບອາເມລິກາ ແລະ ອາກເມນີ ໄດ້ຝຶກຊ້ອມຮົບຢູ່ອາກເມນີ ລະຫວ່າງວັນທີ 10-20/9/2023.

ຕິດພັນກັບ 04 ເຂດແຄວ້ນທາງພາກຕາເວັນອອກຂອງອູແກຣນ ທີ່ ລັດເຊຍ ໄດ້ເຂົ້າໄປຄຸ້ມຄອງ ແລະ ປະກາດຮັບຮູ້ນັ້ນ, ວັນທີ 8-10/9/2023, ທາງການ 04 ເຂດແຄ້ວນດັ່ງກ່າວ (Luhansk, Donetsk, Kherson ແລະ Zapozazhia) ໄດ້ຈັດເລືອກຕັ້ງທ້ອງຖິ່ນເພື່ອກະກຽມໃຫ້ແກ່ການເລືອກຕັ້ງປະທານາທິບໍດີລັດເຊຍ ໃນປີ 2024, ຊຶ່ງແມ່ນພັກລັດເຊຍເອກະພາບ ໄດ້ຄະແນນສຽງ 70%, ເປັນໄຊຊະນະຂອງພັກກຳອຳນາດຂອງລັດເຊຍໃນປັດຈຸບັນ, ຊຶ່ງປະທານາທິບໍດີ ປູຕິນ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດດັ່ງກ່າວ.

**3). ກອງປະຊຸມສຸດຍອດຜູ້ນຳກຸ່ມປະເທດ G20**

ວັນທີ 09-10/09/2023, ອິນເດຍ ໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດຜູ້ນຳກຸ່ມປະເທດ G20 ຄັ້ງທີ 18 ທີ່ ນະຄອນຫຼວງນິວເດລີ ພາຍໃຕ້ຫົວຂໍ້: One Earth One Family One Future ໂດຍມີ 40 ຄະນະຜູ້ແທນຈາກບັນດາ

ປະເທດສະມາຊິກ, ປະເທດທີ່ຖືກເຊີນ, ກຸ່ມປະເທດ ແລະ ອົງການຈັດຕັ້ງສາກົນ ເຂົ້າຮ່ວມ, ແຕ່ຜູ້ນໍາຂັ້ນສູງຂອງຈີນ, ລັດເຊຍ, ແມກຊິໂກ ແລະ ແອັດສະປາຍ ບໍ່ໄດ້ເຂົ້າຮ່ວມ. ຈີນ ສົ່ງນາຍົກລັດຖະມົນຕີ ເຂົ້າຮ່ວມ ແລະ ລັດເຊຍ ສົ່ງລັດຖະມົນຕີຕ່າງປະເທດເຂົ້າຮ່ວມ. ກອງປະຊຸມໄດ້ປຶກສາຫາລືກັນໃນຫຼາຍບັນຫາເປັນຕົ້ນ: ການຂະຫຍາຍຕົວຂອງເສດຖະກິດ ແລະ ວຽກເຮັດງານທໍາ; ການເງິນ ແລະ ພື້ນຖານໂຄງລ່າງສາທາລະນະດິຈິຕອນ; ເປົ້າໝາຍການພັດທະນາແບບຍືນຍົງ; ດິນຟ້າອາກາດ; ການປະຕິຮູບທະນາຄານເພື່ອພັດທະນາຫຼາຍຝ່າຍ ແຕ່ບໍ່ໄດ້ເນັ້ນໜັກເຖິງຂໍ້ຂັດແຍ່ງອູແກຣນ-ລັດເຊຍ. ກອງປະຊຸມໄດ້ອອກຖະແຫຼງການຮ່ວມ ໂດຍລະບຸວ່າ ກອງປະຊຸມສຸດຍອດຜູ້ນໍາກຸ່ມປະເທດ G20 ເປັນເວທີປຶກສາຫາລືທາງດ້ານການຮ່ວມມືເສດຖະກິດສາກົນ, ການຮ່ວມມືຂອງຫຼາຍຝ່າຍ, ເຄື່ອນໄຫວບົນພື້ນຖານຄວາມເປັນເອກະພາບຂອງບັນດາປະເທດສະມາຊິກ, ຕັ້ງໜ້າແຂ່ງຂັນການສ້າງຜົນງານ ແລະ ຮ່ວມກັນຮັບມືກັບສິ່ງທ້າທາຍຂອງໂລກ. ພ້ອມນີ້, ກອງປະຊຸມ ໄດ້ຮັບຮອງເອົາ ສະຫະພາບອາຟຣິກາ (ສະມາຊິກ 55 ປະເທດ) ເຂົ້າຮ່ວມເປັນສະມາຊິກຂອງກຸ່ມຢ່າງເປັນທາງການ.

ທ່ານ ຫຼີ ສຽງ, ນາຍົກລັດຖະມົນຕີຈີນ ກ່າວໃນກອງປະຊຸມວ່າ ປະເທດສະມາຊິກກຸ່ມ G20 ຄວນຍຶດໝັ້ນຄວາມສາມັກຄີ, ການຮ່ວມມື, ສັນຕິພາບ ແລະ ການພັດທະນາ; ຮ່ວມກັນເພີ່ມທະວີຄວາມໝັ້ນຄົງທາງອຸດສາຫະກໍາ ແລະ ຊຸກຍູ້ການພັດທະນາສີຂຽວ. ຂະນະທີ່, ໃນການເຈລະຈານອກຮອບລະຫວ່າງ ອາເມລິກາ ແລະ ອິນເດຍ, ສອງຝ່າຍໄດ້ປະກາດຂໍ້ຕົກລົງສ້າງທາງລົດໄຟ ແລະ ທ່າເຮືອຂ້າມຊາດ ເຊື່ອມຕໍ່ກັບຕາເວັນອອກກາງ ແລະ ການສະໜອງ Semiconductor. ນັກວິເຄາະຈໍານວນໜຶ່ງ ໄດ້ໃຫ້ທັດສະນະວ່າ ຂໍ້ຕົກລົງດັ່ງກ່າວ ແມ່ນເພື່ອສະກັດກັ້ນໂດຍກົງຕໍ່ນະໂຍບາຍໜຶ່ງແລວໜຶ່ງເສັ້ນທາງຂອງຈີນ. ແຕ່ໂດຍລວມແລ້ວ, ກອງປະຊຸມ G20 ໄດ້ຮັບຜົນສໍາເລັດຢ່າງຈົບງາມ, ຫຼາຍປະເທດໄດ້ສະແດງຄວາມຊົມເຊີຍຕໍ່ຄວາມເປັນກາງຂອງອິນເດຍ ໃນຖານະເປັນເຈົ້າພາບຄັ້ງນີ້.

**4). ກອງປະຊຸມເສດຖະກິດຕາເວັນອອກ (EEF) ຄັ້ງທີ 08**

ລະຫວ່າງວັນທີ 10-13/09/2023, ກອງປະຊຸມເສດຖະກິດຕາເວັນອອກ ຄັ້ງທີ 08 ໄດ້ຈັດຂຶ້ນຢູ່ເມືອງ Vladivastok ຂອງ ລັດເຊຍ ພາຍໃຕ້ຫົວຂໍ້: ທ່າມກາງການຮ່ວມມື, ສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງ. ກອງປະຊຸມມີຈຸດປະສົງເພື່ອສົ່ງເສີມການຮ່ວມມື ແລະ ແລກປ່ຽນວັດທະນະທໍາລະຫວ່າງບັນດາປະເທດໃນຂົງເຂດອາຊີ-ປາຊີຟິກ ໂດຍມີຄະນະຜູ້ແທນເຂົ້າຮ່ວມຫຼາຍກວ່າ 7.000 ຄົນ ຈາກຂົງເຂດການເມືອງ, ເສດຖະກິດ, ພະລັງງານ, ວັດທະນະທໍາ, ການສຶກສາ ແລະ ການທ່ອງທ່ຽວ, ໃນນັ້ນ, ຄະນະຜູ້ແທນຂອງ ສປປ ລາວ ນໍາໂດຍ ທ່ານ ນາງ ປານີ ຢາທໍ່ຕູ້, ຮອງປະທານປະເທດແຫ່ງ ສປປ ລາວ ເຂົ້າຮ່ວມ. ໃນກອງປະຊຸມ ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ກ່າວວ່າ ພວກເຮົາຮັບຮູ້ ແລະ ເຫັນໄດ້ວ່າເສດຖະກິດໂລກມີການປ່ຽນແປງ ແລະ ສືບຕໍ່ປ່ຽນແປງຢ່າງຕໍ່ເນື່ອງລຽນຕິດ ເນື່ອງຈາກຕາເວັນຕົກ ກໍາລັງທໍາລາຍລະບົບການເງິນ, ເສດຖະກິດ ແລະ ການຄ້າທີ່ພວກເຂົາສ້າງຂຶ້ນມາ; ໄດ້ເນັ້ນໜັກເຖິງຄວາມສໍາຄັນຂອງການຮ່ວມມືຫຼາຍຝ່າຍເພື່ອຊຸກຍູ້ເສດຖະກິດຮ່ວມກັນ, ທັງໄດ້ແຈ້ງວ່າການຄ້າລະຫວ່າງລັດເຊຍ ກັບປະເທດອາຊີ-ປາຊີຟິກ ເພີ່ມຈາກ 13,7% ໃນປີ 2022 ເປັນ 18,3% ໃນ 6 ເດືອນຕົ້ນປີ 2023.

ໃນໂອກາດກອງປະຊຸມດັ່ງກ່າວ, ທ່ານ ນາງ ປານີ ຢາທໍ່ຕູ້, ຮອງປະທານປະເທດແຫ່ງ ສປປ ລາວ ໄດ້ພົບປະນອກຮອບ ກັບ ທ່ານ Vladimir Putin, ປະທານາທິບໍດີລັດເຊຍ, ຊຶ່ງໄດ້ຕີລາຄາສູງໃນການເສີມຂະຫຍາຍການຮ່ວມມືໃນຂົງເຂດຕ່າງໆຂອງສອງປະເທດ ລາວ-ລັດເຊຍ ແລະ ສະແດງຄວາມຂອບໃຈຕໍ່ການເຊື້ອເຊີນເຂົ້າຮ່ວມກອງປະຊຸມໃນຄັ້ງນີ້. ທ່ານ Vladimir Putin ກ່າວວ່າ ສາຍພົວພັນຂອງສອງປະເທດກໍາລັງພັດທະນາໃນຫຼາຍຂົງເຂດ, ການແກ້ໄຂທາງດ້ານການເງິນເປັນບັນຫາຮີບດ່ວນ ແລະ ເຊື່ອໝັ້ນວ່າສອງປະເທດຈະສາມາດແກ້ໄຂບັນຫາດັ່ງກ່າວໄດ້.

**5). ກອງປະຊຸມສຸດຍອດກຸ່ມປະເທດ G77 ແລະ ຈີນ**

ລະຫວ່າງວັນທີ 15-16/09/2023, ກອງປະຊຸມສຸດຍອດກຸ່ມປະເທດ G77 ແລະ ຈີນ ໄດ້ຈັດຂຶ້ນ ຢູ່ນະຄອນຫຼວງລາຮາວານ ຂອງກູບາ ພາຍໃຕ້ຫົວຂໍ້: ບັນດາສິ່ງທ້າທາຍການພັດທະນາໃນປັດຈຸບັນ: ບົດບາດຂອງວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ, ມີການເຂົ້າຮ່ວມຂອງບັນດາຜູ້ນໍາປະເທດສະມາຊິກ 134 ປະເທດ, ພ້ອມດ້ວຍ ເລຂາທິການໃຫຍ່ ສປຊ ແລະ ຕາງໜ້າອົງການຈັດຕັ້ງສາກົນຕ່າງໆ. ກອງປະຊຸມໄດ້ປຶກສາຫາລື ແລະ ແລກປ່ຽນບົດຮຽນໃນການພັດທະນາ, ການນໍາໃຊ້ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ເຂົ້າໃນການພັດທະນາ ແລະ ແກ້ໄຂບັນດາສິ່ງທ້າທາຍຕ່າງໆໃນປັດຈຸບັນ ພ້ອມທັງໄດ້ເນັ້ນຢໍ້າຄວາມສາມັກຄີ ກໍຄື ຫຼັກການລວມຂອງກຸ່ມປະເທດ G77 ແລະ ຈີນ. ພ້ອມນີ້, ກອງປະຊຸມໄດ້ຮັບຮອງເອົາຖະແຫຼງການຮ່ວມລາຮາວານ ໂດຍເນັ້ນໜັກການປະຕິຮູບລະບົບການເງິນສາກົນ ຢ່າງຮອບດ້ານ ແລະ ຮີບດ່ວນ, ຄັດຄ້ານການລົງໂທດຝ່າຍດຽວ, ການກະທໍາທີ່ບໍ່ທ່ຽງທໍາທີ່ຂັດຂວາງການພັດທະນາ ແລະ ຮຽກຮ້ອງໃຫ້ປະຊາຄົມໂລກສ້າງສິ່ງແວດລ້ອມແບບເປີດກວ້າງ, ຍຸດຕິທໍາ, ກວມລວມ, ຊຸກຍູ້ການ

ພົວພັນສາກົນ ແລະ ການຮ່ວມມືຫຼາຍຝ່າຍ. ພ້ອມນີ້, ກອງປະຊຸມຍັງໄດ້ເຫັນດີກຳນົດເອົາວັນທີ 16 ກັນຍາ ຂອງທຸກປີ ເປັນວັນວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ຂອງບັນດາປະເທດທີ່ກຳລັງພັດທະນາ.

ໃນໂອກາດດັ່ງກ່າວ, ທ່ານ ທອງລຸນ ສີສຸລິດ, ປະທານປະເທດແຫ່ງ ສປປ ລາວ ໄດ້ກ່າວປາໄສໃນກອງປະຊຸມ ດັ່ງກ່າວ ໂດຍມີເນື້ອໃນບາງຕອນວ່າ: ສະແດງຄວາມຊົມເຊີຍລັດຖະບານ ກໍຄື ປະຊາຊົນກູບາ ໃນນາມປະທານກຸ່ມ G77 ແລະ ຈີນ ກໍຄືປະເທດເຈົ້າພາບກອງປະຊຸມ ພ້ອມທັງໄດ້ຕີລາຄາການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາ, ຊຶ່ງ ເຫັນວ່າປະເທດກຳລັງພັດທະນາ ໄດ້ຕົກຢູ່ໃນສະພາບເສດຖະກິດຖົດຖອຍ, ມີທ່າອ່ຽງທີ່ຈະບໍ່ສາມາດບັນລຸເປົ້າໝາຍການ ພັດທະນາແບບຍືນຍົງໄດ້; ຮຽກຮ້ອງໃຫ້ຊອກຫາແນວທາງ ແລະ ວິທີການແບບໃໝ່ເພື່ອຟື້ນຟູເສດຖະກິດ-ສັງຄົມ ທີ່ໄດ້ ຮັບຜົນກະທົບຈາກວິກິດການຕ່າງໆ ແລະ ສືບຕໍ່ສ້າງຄວາມເຂັ້ມແຂງໂດຍການນຳໃຊ້ນະວັດຕະກຳ ແລະ ເຕັກໂນໂລຊີທີ່ ທັນສະໄໝເພື່ອບັນລຸໄດ້ຕາມຄາດໝາຍ.

**6). ກອງປະຊຸມສະມັດຊາໃຫຍ່ ສປຊ (UNGA) ສະໄໝທີ 78**

ວັນທີ 18-19/09/2023, ກອງປະຊຸມສະມັດຊາໃຫຍ່ ສປຊ (UNGA) ສະໄໝທີ 78 ໄດ້ຈັດຂຶ້ນຢູ່ ສຳນັກງານ ໃຫຍ່ ສປຊ ທີ່ ນະຄອນນິວຢອກ ຂອງອາເມລິກາ ໂດຍການເຂົ້າຮ່ວມຂອງບັນດາປະມຸກລັດ, ຫົວໜ້າລັດຖະບານ ແລະ ຜູ້ ຕາງໜ້າລະດັບສູງຂອງປະເທດສະມາຊິກ ສປຊ. ກອງປະຊຸມຄັ້ງນີ້, ຜູ້ນຳຂອງ 05 ປະເທດສະມາຊິກຖາວອນມີພຽງ ປະທານາທິບໍດີອາເມລິກາ ເຂົ້າຮ່ວມ, ສ່ວນຜູ້ນຳສູງສຸດຂອງຈີນ, ລັດເຊຍ, ຝຣັ່ງ, ອັງກິດ ບໍ່ເຂົ້າຮ່ວມ, ຈີນ ແມ່ນ ທ່ານ ຮານເຈິ້ງ, ຮອງປະທານປະເທດ; ລັດເຊຍ ແມ່ນ ທ່ານ Sergey Lavrov, ລັດຖະມົນຕີຕ່າງປະເທດລັດເຊຍ ເຂົ້າຮ່ວມ. ກອງປະຊຸມໄດ້ປຶກສາຫາລືພາຍໃຕ້ຫົວຂໍ້: ການສ້າງຄວາມໄວ້ເນື້ອເຊື່ອໃຈ ແລະ ຟື້ນຟູຄວາມສາມັກຄີຄືນໃໝ່: ເລັ່ງລັດ ການຈັດຕັ້ງປະຕິບັດ ວາລະຮອດປີ 2030 ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ, ຊຸກຍູ້ສັນຕິພາບ, ສ້າງຄວາມ ຈະເລີນຮຸ່ງເຮືອງໃຫ້ແກ່ມວນມະນຸດ. ໃນໂອກາດດັ່ງກ່າວ, ທ່ານ Antonio Guterres, ເລຂາທິການໃຫຍ່ ສປຊ ໄດ້ກ່າວ ວ່າ ວິງຄະນາຍາດສາກົນປະຕິບັດເປົ້າໝາຍການພັດທະນາແບບຍືນຍົງໃນປີ 2015 ໃນການແກ້ໄຂຄວາມທຸກຍາກ, ໄພ ອຶດຫິວ, ຂໍ້ຂັດແຍ່ງ ແລະ ສິ່ງທ້າທາຍຕ່າງໆ ໄດ້ພຽງ 15%; ໄດ້ສະເໜີ 06 ເປົ້າໝາຍຮີບດ່ວນທີ່ບັນດາປະເທດຕ້ອງພ້ອມ ກັນຈັດຕັ້ງປະຕິບັດຄື: ການລຶບລ້າງໄພອຶດຫິວ, ການຫັນປ່ຽນໄປສູ່ການນຳໃຊ້ພະລັງງານທົດແທນ, ການຫັນເປັນດີຈີ ຕອນ, ການປັບປຸງຄຸນນະພາບຂອງການສຶກສາ, ການສົ່ງເສີມໃຫ້ມີວຽກເຮັດງານທຳ ແລະ ການປົກປັກຮັກສາ ສິ່ງແວດລ້ອມ.

ພ້ອມນີ້, ທ່ານ ສະເຫຼີມໄຊ ກົມມະສິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ, ຫົວ ໜ້າຄະນະຜູ້ແທນ ສປປ ລາວ ໄດ້ປະກອບຄຳເຫັນໃນຫົວຂໍ້: ການລະດົມທຶນ, ການລົງທຶນ ແລະ ແນວທາງການຈັດຕັ້ງປະ ຕິບັດ ເພື່ອສາມາດບັນລຸເປົ້າໝາຍການພັດທະນາແບບຍືນຍົງ. ສປປ ລາວ ສະໜັບສະໜູນບັນດາເປົ້າໝາຍດັ່ງກ່າວ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ເພື່ອພາປະເທດຊາດກ້າວສູ່ຄວາມຮັ່ງມີໝັ້ນຄົງ.

ກອງປະຊຸມ UNGA ຄັ້ງນີ້ ໄດ້ມີການພົບປະນອກຮອບລະຫວ່າງ ປະທານາທິບໍດີອູແກຣນ ກັບ ປະທານາທິບໍດີ ອິດສະຣາແອນ; ປະທານາທິບໍດີອູແກຣນ ກັບ ປະທານາທິບໍດີເຢຍລະມັນ, ຊຶ່ງອິດສະຣາແອນ ແລະ ເຢຍລະມັນ ຕ່າງຢໍ້າຈະ ໃຫ້ການສະໜັບສະໜູນມະນຸດສະທຳແກ່ອູແກຣນ. ສ່ວນ ທ່ານ ຫວັງອີ້, ລັດຖະມົນຕີຕ່າງປະເທດຈີນ ໄດ້ຢ້ຽມຢາມ ແລະ ພົບປະກັບ ລັດຖະມົນຕີຕ່າງປະເທດລັດເຊຍ ທີ່ ນະຄອນຫຼວງມົດສະກູ ເພື່ອກະກຽມໃຫ້ແກ່ການຢ້ຽມຢາມຈີນ ໃນເດືອນ 10/2023 ຂອງ ປະທານາທິບໍດີລັດເຊຍ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ ແລະ ບັນດາສະຖານທູດແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບຄະນະຜູ້ແທນພັກກອມມູນິດຈີນ



ສະຫາຍ ຫຼິວຈ້ຽນຊາວ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຢ່າງເປັນທາງການ ແຕ່ວັນທີ 6-8 ກັນຍາ 2023, ໄດ້ພົບປະເຮັດວຽກກັບ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີ ແລະ ຕີລາຄາສູງ ຕໍ່ການມາຢ້ຽມຢາມ ສປປ ລາວ ຄັ້ງທຳອິດຂອງ ສະຫາຍ ຫຼິວຈ້ຽນຊາວ ພາຍຫຼັງທີ່ໄດ້ຮັບການແຕ່ງຕັ້ງ ເປັນຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນຄົນໃໝ່. ສອງຝ່າຍ ໄດ້ແຈ້ງໃຫ້ກັນຊາບສະພາບການພົວພັນພາຍໃນຂອງແຕ່ລະຝ່າຍ, ຕີລາຄາສູງ ຕໍ່ ໝາກຜົນຂອງການພົວພັນຮ່ວມມື ລະຫວ່າງສອງພັກ ແລະ ປະຊາຊົນສອງຊາດ ລາວ-ຈີນ ໃນໄລຍະຜ່ານມາ, ແລກປ່ຽນຄຳຄິດເຫັນນຳກັນ ກ່ຽວກັບ ການເສີມຂະຫຍາຍສາຍພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງຄະນະພົວພັນຕ່າງປະເທດສູນກາງພັກ, ບັນຫາພາກພື້ນ ແລະ ສາກົນ ຈຳນວນໜຶ່ງ ທີ່ສອງຝ່າຍໃຫ້ຄວາມສົນໃຈ; ສອງຝ່າຍເຫັນດີເອກະພາບ ໃນການສືບຕໍ່ຮັດແໜ້ນການປະສານທົບກັນ ໃນການເຮັດໜ້າທີ່ເປັນເສນາທິການໃຫ້ແກ່ສູນກາງພັກ, ຈັດຕັ້ງປະຕິບັດແຜນການຮ່ວມມືລະຫວ່າງ ສອງພັກ ແລະ ສອງຄະນະພົວພັນຕ່າງປະເທດສູນກາງພັກ ໃຫ້ເກີດດອກອອກຜົນ ກໍຄື ຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈທີ່ເປັນເອກະພາບກັນ ລະຫວ່າງ ການນຳສູງສຸດຂອງ ສອງພັກ, ສອງລັດ ໃນການສືບຕໍ່ເພີ່ມພູນຄູນສ້າງສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ ໝັ້ນຄົງຍາວນານ ຕາມທິດ 4 ດີ ໃຫ້ເຂົ້າສູ່ລວງເລິກ, ຊຸກຍູ້ການສ້າງຄູ່ຮ່ວມຊະຕາກຳ ລາວ-ຈີນ ດ້ວຍມາດຕະຖານສູງ, ຄຸນນະພາບສູງ ແລະ ລະດັບສູງກວ່າເກົ່າ.

## 2. ປາຖະກະຖາວັນສ້າງຕັ້ງ ສປປ ເກົາຫຼີ ຄົບຮອບ 75 ປີ



ວັນທີ 06 ກັນຍາ 2023 ທີ່ສະໂມສອນຫຼັກ 4 ແຂວງຈຳປາສັກ, ແຂວງຈຳປາສັກ ແລະ ສະມາຄົມ ມິດຕະພາບ ລາວ - ສປປ ເກົາຫຼີ ຮ່ວມກັບສະຖານເອກອັກຄະລັດຖະທູດແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຈັດພິທີປາຖະກະຖາ ເນື່ອງໃນໂອກາດວັນສະຖາປະນາ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕ ເກົາຫຼີ ຄົບຮອບ 75 ປີ (9/9/1948 – 9/9/2023), ໂດຍມີຜູ້ເຂົ້າຮ່ວມ ປະມານ 300 ຄົນ. ໃນໂອກາດດັ່ງກ່າວໄດ້ມີການວາງສະແດງຮູບພາບ, ສາຍວີດີໂອ ສະແດງສິລະປະຂອງ ສປປ ເກົາຫຼີ ແລະ ປາຖະກະຖາກ່ຽວກັບຜົນງານມູນເຊື້ອການຕໍ່ສູ້ ພາຍໃຕ້ການນຳພາຂອງພັກແຮງ ງານເກົາຫຼີໃນໄລຍະຜ່ານມາ ແລະ ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສປປ ເກົາຫຼີ ໃນປະຈຸບັນ. ໃນ ໂອກາດນີ້, ສະຫາຍ ລີ ຢົງ ຊົນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຂຶ້ນກ່າວປາຖະກະຖາເຖິງຜົນງານຂອງພັກແຮງງານເກົາຫຼີ, ລັດຖະບານ ແລະ ປະຊາຊົນ ສປປ ເກົາຫຼີ ພາຍໃຕ້ການ ຊີ້ນຳໆພາຂອງ ສະຫາຍ ກິມ ອິນຊຸງ, ຜູ້ນຳທີ່ຍິ່ງໃຫຍ່, ປະທານປະເທດຕະຫຼອດການ ແຫ່ງ ສປປ ເກົາຫຼີ ແລະ ຜູ້ນຳພາ ແສງສະຫວ່າງແນວຄິດຈຸດເຊ່ ໃນພາລະກິດປະຕິວັດຂອງພັກ, ກຳລັງປະກອບອາວຸດ ແລະ ປະຊາຊົນ ສປປ ເກົາຫຼີ ໃນ ຂະບວນວິວັດແຫ່ງການຕໍ່ສູ້ປົດປ່ອຍຊາດກໍ່ຄືປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສປປ ເກົາຫຼີ ແລະ ສະຫາຍ ກິມ ເຈີງ ອິນ, ຜູ້ນຳທີ່ຍິ່ງໃຫຍ່ຂອງປະຊາຊົນເກົາຫຼີ, ປະທານຄະນະກຳມະທິການປ້ອງກັນຊາດແຫ່ງ ສປປ ເກົາຫຼີ ຕະຫຼອດການ; ປັດຈຸບັນພາຍໃຕ້ການນຳພາຂອງ ສະຫາຍ ກິມ ເຈີງອຸນ, ຜູ້ນຳທີ່ເຄົາລົບຮັກ, ເລຂາທິການໃຫຍ່ພັກແຮງ ງານເກົາຫຼີ, ປະທານກິດຈະການແຫ່ງລັດແຫ່ງ ສປປ ເກົາຫຼີ, ຜູ້ບັນຊາການສູງສຸດກຳລັງປະກອບອາວຸດແຫ່ງ ສປປ ເກົາຫຼີ ອັນໄດ້ເຮັດໃຫ້ ສປປ ເກົາຫຼີ ມີການພັດທະນາຮອບດ້ານ, ການເມືອງມີສະຖຽນລະພາບໜັກແໜ້ນ, ວຽກງານປ້ອງ ກັນຊາດປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງທັນສະໄໝ, ເສດຖະກິດມີການພັດທະນາ, ຊີວິດການເປັນຢູ່ຂອງ ປະຊາຊົນ ສປປ ເກົາຫຼີໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ, ຊຶ່ງເຮັດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ເຖິງສະພາບການຕົວຈິງ ໃນການ ພັດທະນາກໍຄືຜົນສຳເລັດອັນໃຫຍ່ຫຼວງທີ່ປະຊາຊົນ ສປປ ເກົາຫຼີ ຍາດມາໄດ້.

### 3. ຄະນະພົວພັນຕ່າງປະເທດສູນກາງພັກ ອວຍພອນວັນຊາດ ສປປ ເກົາຫຼີ ຄົບຮອບ 75 ປີ



ວັນທີ 8 ກັນຍາ 2023, ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງ ພັກ ປະຊາຊົນ ປະຕິວັດລາວ ພ້ອມດ້ວຍພະນັກງານຫຼັກແຫຼ່ງ ໄດ້ຕາງໜ້າໃຫ້ ຄະນະພັກ ຄະນະນຳ ຄະນະພົວພັນ ຕ່າງປະເທດສູນກາງພັກ ໄປຢ້ຽມອວຍພອນ ສະຖານເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈຳ ສປປ ລາວ ເນື່ອງໃນ ໂອກາດ ວັນສະຖາປະນາ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕ ເກົາຫຼີ ຄົບຮອບ 75 ປີ (9/9/1948-9/9/2023). ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ຜົນສຳເລັດອັນໃຫຍ່ຫລວງຂອງ ພັກ, ລັດຖະບານ ແລະ ປະຊາຊົນ ສປປ ເກົາຫຼີ ທີ່ຍາດມາໄດ້ ໃນຕະຫລອດໄລຍະ 75 ປີ ຜ່ານມາ ໃນການສ້າງສາ ແລະ ພັດທະນາປະເທດຊາດ ສປປ ເກົາຫຼີ ພາຍໃຕ້ການນຳພາອັນເຂັ້ມແຂງ ແລະ ເດັດດ່ຽວໜຽວແໜ້ນຂອງ ພັກແຮງງານ ເກົາຫລີ ອັນມີ ປະທານ ກິມ ອິນຊຸງ ແລະ ປະທານ ກິມເຈີງອິນ, ຜູ້ນຳທີ່ຍິ່ງໃຫຍ່ຂອງ ປະຊາຊົນ ສປປ ເກົາຫລີ ເປັນຜູ້ນຳ ໃນເມື່ອກ່ອນ, ກໍຄື ສະຫາຍ ກິມ ເຈີງອຸນ ທີ່ເປັນຜູ້ສືບທອດພາລະກິດການປະຕິວັດອັນຍິ່ງໃຫຍ່ ໃນປັດຈຸບັນ.

**4. ຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ຈີນ ສຳເລັດການເຂົ້າຮ່ວມກອງປະຊຸມ ສະມາຄົມມິດຕະພາບ ລະຫວ່າງ ປະຊາຊົນກັບປະຊາຊົນ ອາຊຽນ-ຈີນ ຄັ້ງທີ 14**




ຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ຈີນ ນຳໂດຍ ທ່ານ ບຸນເຖິງ ດວງສະຫວັນ, ຮອງລັດຖະມົນຕີກະຊວງອຸກສາຫະກຳ ແລະ ການຄ້າ, ຮອງປະທານສະມາຄົມມິດຕະພາບ ລາວ-ຈີນ ໄດ້ເຂົ້າຮ່ວມກອງປະຊຸມ ສະມາຄົມມິດຕະພາບ ລະຫວ່າງ ປະຊາຊົນກັບປະຊາຊົນ ອາຊຽນ-ຈີນ ຄັ້ງທີ 14 ພາຍໃຕ້ຫົວຂໍ້ "ການຮ່ວມມືອາຊຽນ-ຈີນ ພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ, ເສີມຂະຫຍາຍການເຊື່ອມຈອດ ແລະ ມຸ່ງໝັ້ນພັດທະນາມີຄຸນນະພາບ" ທີ່ນະຄອນປີນັງ, ປະເທດມາເລເຊຍ ໃນລະຫວ່າງ ວັນທີ 03-06 ກັນຍາ 2023 ໂດຍການເປັນເຈົ້າພາບຈັດຂອງ ສະມາຄົມມິດຕະພາບ ມາເລເຊຍ-ຈີນ, ມີຜູ້ແທນຈາກສະມາຄົມມິດຕະພາບ 10 ປະເທດອາຊຽນ ແລະ ສປ ຈີນ ເຂົ້າຮ່ວມ.

ຫົວໜ້າຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ຈີນ ໄດ້ ປະກອບຄຳເຫັນໃນກອງປະຊຸມ ໂດຍໄດ້ຕີລາຄາສູງ ແລະ ຊົມເຊີຍຕໍ່ການເປັນເຈົ້າພາບຂອງສະມາຄົມມິດຕະພາບ ມາເລເຊຍ-ຈີນ; ຍົກໃຫ້ເຫັນກົນໄກການພົວພັນຮ່ວມມື, ແລກປ່ຽນຄວາມຄິດເຫັນໃນການຮ່ວມມືມິດຕະພາບ ລະຫວ່າງ ປະຊາຊົນ ຈີນ-ອາຊຽນ ແລະ ອາຊຽນ-ຈີນ ພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ, ຊຶ່ງເປັນວຽກງານທີ່ສຳຄັນ, ຈຳເປັນ ແລະ ຮີບດ່ວນ ເພື່ອສົ່ງເສີມການຮ່ວມມື ຂອງບັນດາປະເທດອາຊຽນ ກັບ ສປ ຈີນ ກໍຄືພາກພື້ນ ແລະ ໃນໂລກ; ຊຸກຍູ້ໃຫ້ປະຊາຊົນບັນດາປະເທດອາຊຽນ ແລະ ປະຊາຊົນຈີນ ມີການໄປມາຫາສູ່ກັນ, ຈັດກິດຈະກຳຮ່ວມກັນ, ຊ່ວຍເຫຼືອເຊິ່ງກັນແລະກັນ ຄືດັ່ງທີ່ເຄີຍປະຕິບັດກ່ອນການແຜ່ລະບາດຂອງພະຍາດໂຄວິດ; ສ້າງເງື່ອນໄຂສະດວກໃຫ້ແກ່ປະຊາຊົນອາຊຽນ-ຈີນ ຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ ນັບມື້ຫຼາຍຂຶ້ນ ໂດຍນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ ໃຫ້ເກີດປະໂຫຍດສູງສຸດ ແລະ ຮອບດ້ານ ມາສູ່ປະຊາຊົນບັນດາປະເທດອາຊຽນ ແລະ ປະຊາຊົນຈີນ.

ກອງປະຊຸມ ໄດ້ຮັບຮອງເອົາຖະແຫຼງການຮ່ວມຂອງກອງປະຊຸມ, ເຊິ່ງມີເນື້ອໃນເນັ້ນໜັກເຖິງການເພີ່ມທະວີການແລກປ່ຽນ ແລະ ການຮ່ວມມືລະຫວ່າງປະຊາຄົມອາຊຽນ-ຈີນ ໃຫ້ມີຄວາມໃກ້ຊິດ ແລະ ຄ່ອງຕົວ; ເພີ່ມທະວີການຮ່ວມມືໃນຂົງເຂດສິລະປະ, ການສຶກສາ, ສື່ມວນຊົນ ແລະ ຊາວໜຸ່ມ; ຊຸກຍູ້ການພັດທະນາແບບຍືນຍົງ ແລະ ສາທາລະນະສຸກ ລວມທັງການຜະລິດຢາພື້ນເມືອງອາຊຽນ-ຈີນ ແລະ ຊຸກຍູ້ການຮ່ວມມືດ້ານພະລັງງານທົດແທນ ແລະ ພະລັງງານສະອາດ; ເພີ່ມທະວີການປະສານສົມທົບກັນ ລະຫວ່າງ ຂໍ້ລິເລີ່ມໜຶ່ງແລວທາງໜຶ່ງເສັ້ນທາງ ແລະ ແຜນການຂອງອາຊຽນກ່ຽວກັບອິນໂດປາຊີຟິກ ແລະ ສະໜັບສະໜູນຂໍ້ລິເລີ່ມ 3 ຂໍ້ ທີ່ປະທານປະເທດ ທ່ານ ສີ ຈິ້ນຜິງ ວາງອອກ (ຂໍ້ລິເລີ່ມຄວາມໝັ້ນຄົງຂອງໂລກ, ຂໍ້ລິເລີ່ມການພັດທະນາ ແລະ ຂໍ້ລິເລີ່ມທາງດ້ານຄວາມສີວິໄລ) ເພື່ອສັນຕິພາບ ແລະ ສະຖຽນລະພາບໃນພາກພື້ນ; ຊຸກຍູ້ການໂຄສະນາເຜີຍແຜ່ໜັງສືພິມຜ່ານທາງອອນລາຍ ເພື່ອແຈ້ງໃຫ້ຊາບກ່ຽວກັບຂໍ້ມູນໃໝ່ ແລະ ການເຄື່ອນໄຫວກິດຈະກຳ ຂອງສະມາຄົມອາຊຽນ-ຈີນ ແລະ ສະມາຄົມມິດຕະພາບປະຊາຊົນອາຊຽນ; ສະແດງຄວາມຍິນດີ ແລະ ສະໜັບສະໜູນ ສະມາຄົມມິດຕະພາບ ມຽນມາ-ຈີນ ທີ່ຈະເປັນເຈົ້າພາບຈັດກອງປະຊຸມ ສະມາຄົມມິດຕະພາບ ລະຫວ່າງ ປະຊາຊົນກັບປະຊາຊົນ ອາຊຽນ-ຈີນ ຄັ້ງທີ 15 ທີ່ ສ. ມຽນມາ.

# III. ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ ຄຕພ

**ຄະນະບໍລິຫານງານຊາວໜຸ່ມ ຄຕພ ມອບເງິນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ**




ວັນທີ 14 ກັນຍາ 2023, ສະຫາຍ ຄຳເຝື້ອງ ພັນທະໄຊ, ເລຂາຄະນະບໍລິຫານງານຊາວໜຸ່ມ ຄຕພ ໄດ້ນຳພາຄະນະຊາວໜຸ່ມ ໄປມອບເງິນຊ່ວຍເຫຼືອ ຈຳນວນ 10 ລ້ານກີບ ໃຫ້ສູນກາງຊາວໜຸ່ມ ປປ ລາວ ເພື່ອນຳໄປຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ທົ່ວປະເທດ, ໂດຍແມ່ນ ສະຫາຍຮອງຫົວໜ້າຫ້ອງການສູນກາງຊາວໜຸ່ມ ປປ ລາວ ເປັນຜູ້ຕາງໜ້າຮັບ ແລະ ໄດ້ສະແດງຄວາມຂອບໃຈຕໍ່ຄະນະພັກ, ຄະນະນຳ ກໍຄື ຄະນະຊາວໜຸ່ມ ຄຕພ  ທີ່ໄດ້ປະກອບສ່ວນຊ່ວຍເຫຼືອດັ່ງກ່າວ.